*ເຈ້ຍຂໍ້ມູນກ່ຽວກັບພະຍາດຕິດຕໍ່*

# ໂຣກນິວໂມ ຄອັກໂຄ

*ການຕິດເຊື້ອຈາກແບັກທີເຣັຍຊຶ່ງເອີ້ນວ່າ **pneumococcal bacteria** ເຮັດໃຫ້ເກີດພະຍາດຫຼາຍຢ່າງເຊັ່ນ ໂຣກເຍື່ອຫຸ້ມສມອງອັກເສບ, ປອດບວມ, ແລະຫູສ່ວນກາງອັກເສບ. ການຕິດເຊື້ອນີ້ມັກເປັນກັນໃນຊ່ວງຣະດູໜາວແລະຣະດູໃບໄມ້ປົ່ງ. ເດັກນ້ອຍແລະຜູ້ສູງອາຍຸແມ່ນພວກທີ່ສ່ຽງທີ່ສຸດ. ການປິ່ນປົວໂຣກນີ້ແມ່ນໃຊ້ຢາປະຕິຊີວະນະ. ການສັກຢາປ້ອງກັນກໍສາມາດປ້ອງກັນໄດ້.*

## ໂຣກນິວໂມ ຄອັກໂຄ **(pneumococcal disease)** ແມ່ນຫຍັງ?

ໂຣກ Pneumococcal ເກີດຂຶ້ນຍ້ອນເຊື້ອແບັກທີເຣັຍຊນິດນຶ່ງຊຶ່ງເອີ້ນວ່າ *Streptococcus pneumoniae*. ການຕິດເຊື້ອນີ້ສາມາດກໍ່ໃຫ້ເກີດເປັນພະຍາດຫຼາຍຊນິດໄດ້ເຊັ່ນ: ປອດບວມ (ຕິດເຊື້ອທີ່ປອດ), ຫູສ່ວນກາງອັກເສບ (ການຕິດເຊື້ອທີ່ຫູສ່ວນກາງ) ແລະ ໂຣກເຍື່ອຫຸ້ມສມອງອັກເສບ (ຕິດເຊື້ອທີ່ເນື້ອເຍື່ອ ຫຸ້ມສມອງແລະໄຂສັນຫຼັງ).

## ໂຣກນີ້ມີອາການຫຍັງແດ່?

ອາການຕ່າງໆຈະເກີດຂຶ້ນແລ້ວແຕ່ວ່າຈະເກີດຂຶ້ນບ່ອນໃດແລະຕາມອາຍຸຂອງຄົນ.

- ໂຣກປອດບວມສາມາດເຮັດໃຫ້ຫາຍໃຈຝືດ, ເປັນໄຂ້, ບໍ່ມີແຮງ, ກິນເຂົ້າບໍ່ແຊບ, ເຈັບຫົວ, ເຈັບເອິກ ແລະ ໄອ.
- ໂຣກຫູສ່ວນກາງອັກເສບສາມາດເຮັດໃຫ້ ຮ້ອງໄຫ້, ເອົາມືກຸມຫູ, ເປັນໄຂ້, ຫົນຫວຍ, ຟັງບໍ່ໄດ້ຍິນຄັກ, ແລະບາງເທື່ອກໍຖອກທ້ອງແລະຮາກ.
- ໂຣກເຍື່ອຫຸ້ມສມອງອັກເສບສາມາດເຮັດໃຫ້ເກີດອາການໄຂ້, ເຈັບຫົວ, ຕົ້ນຄໍແຂງ, ຮາກ ແລະ ເມົາ.

## ໂຣກນີ້ແຜ່ຜາຍໄດ້ຢ່າງໃດ?

ແບັກທີເຣັຍຊນິດນີ້ ສ່ວນຫຼາຍຈະມີຢູ່ໃນຮູຄໍຂອງຄົນທີ່ມີສຸຂພາບໂດຍບໍ່ມີອັນຕຣາຍຫຍັງ. ບາງຄັ້ງແບັກທີເຣັຍນີ້ກໍອາດເຮັດໃຫ້ເກີດຕິດເຊື້ອຂຶ້ນມາໄດ້.

## ແມ່ນໃຜແດ່ທີ່ສ່ຽງຕໍ່ການຕິດໂຣກນີ້?

ຜູ້ທີ່ສ່ຽງຕໍ່ການຕິດເຊື້ອນີ້ຫຼາຍທີ່ສຸດຮວມມີ:

- ເດັກນ້ອຍອາຍຸຕໍ່າກວ່າສອງປີ
- ຜູ້ສູງອາຍຸ
- ຊາວພື້ນເມືອງ Aboriginal ແລະ Torres Strait Islander
- ຜູ້ທີ່ເປັນພະຍາດປອດ, ພະຍາດຫົວໃຈ, ມະເຮັງ, ພະຍາດໝາກໄຂ່ຫຼັງ, ມີເຊື້ອ HIV, ຫຼື ເປັນໂຣກຂາດອາຫານ
- ຜູ້ທີ່ຜ່າຕັດມ້າມອອກຫຼືມ້າມບໍ່ເຮັດວຽກໄດ້ດີ
- ຜູ້ທີ່ສູບຢາ

ການຕິດເຊື້ອ Pneumococcal ມັກເປັນກັນໃນຊ່ວງຣະດູໜາວແລະຕອນຕົ້ນໆຂອງຣະດູໃບໄມ້ປົ່ງ. ການລະບາດໄດ້ເກີດຂຶ້ນທີ່ສູນດູແລເດັກ, ບ້ານພັກຄົນຊະຣາ ແລະ ສະຖາບັນແຫ່ງອື່ນໆ.

## ຈະປ້ອງກັນໂຣກນີ້ໄດ້ຢ່າງໃດ?

### ເດັກນ້ອຍ

ຂໍແນະນໍາໃຫ້ສັກຢາວັກຊີນ Pneumococcal ແລະການສັກຢາແມ່ນຟຣີ ສໍາລັບເດັກທຸກຄົນເມື່ອອາຍຸໄດ້ 2 ເດືອນ, 4 ເດືອນ ແລະ 6 ເດືອນ.

ນອກນີ້ ກໍຍັງສັກໃຫ້ຟຣີແກ່ເດັກທີ່ມີອາຍຸລະຫວ່າງສອງຫາຫ້າປີ ຊຶ່ງເຄີຍເປັນຫຼືກໍາລັງເປັນໂຣກຕ່າງໆດັ່ງນີ້:

- ມີພູມຕ້ານທານບາງຢ່າງຕໍ່າໂດຍກໍາເນີດ
- ກໍາລັງຮັບການປິ່ນປົວໂດຍໃຊ້ຢາບາງຢ່າງຫຼືໃຊ້ແສງ
- ຜ່າຕັດມ້າມອອກແລ້ວຫຼືຜູ້ທີ່ມ້າມບໍ່ເຮັດວຽກໄດ້ດີ
- ມີເຊື້ອ HIV
- ເປັນພະຍາດໝາກໄຂ່ຫຼັງແບບຊໍາເຮື້ອ (ໄຕວາຍ)
- ເປັນໂຣກ ດາວນ໌ ຊິນໂດຣມ
- ພະຍາດຫົວໃຈຊຶ່ງກໍ່ໃຫ້ເກີດອາການເລືອດຂາດອອກຊີເຢັນຫຼືຫົວໃຈວາຍ
- ເດັກເກີດກ່ອນກໍານົດຊຶ່ງເປັນພະຍາດປອດຊໍາເຮື້ອ
- ເດັກທີ່ເກີດຈາກທີ່ແມ່ຖືພາ ນ້ອຍກວ່າ 28 ອາທິດ
- ເປັນໂຣກຖົງເຍື່ອເສັ້ນໃຍຜິດປົກກະຕິ
- ເດັກທີ່ເປັນເບົາຫວານແລະຕ້ອງໃຊ້ຢາອິນຊູລິນ
- ນໍ້າໃນສມອງແລະກະດູກສັນຫຼັງຮົ່ວ
- ກະໂຫຼກຫົວບໍ່ແຈບ ຫຼື ຜ່າຕັດສ່ວນໃນຂອງຫູ

ສຳລັບເດັກທີ່ມີອາການຢ່າງໃດຢ່າງນຶ່ງຂ້າງເທິງ, ຂໍແນະນຳໃຫ້ສັກຢາໃໝ່ອີກເມື່ອອາຍຸໄດ້ 12 ເດືອນ. ແລະສັກວັກຊີນເທົ່າກັບຂອງຜູ້ໃຫຍ່ອີກເທື່ອນຶ່ງເມື່ອອາຍຸໄດ້ 5 ປີ. ໃຫ້ປຶກສາເຣື່ອງນີ້ກັບທ່ານໝໍຂອງທ່ານເບິ່ງ,

## ຢາວັກຊີນ Pneumococcal ນີ້ແມ່ນສັກໃຫ້ຟຣີເຊັ່ນກັນສຳລັບ:

## ຜູ້ໃຫຍ່

- ຜູ້ມີອາຍຸ 65 ປີແລະເກີນກວ່ານັ້ນ
- ຊາວພື້ນເມືອງ Aboriginal ແລະ Torres Strait Islander ທີ່ມີອາຍຸ50ປີແລະເກີນກວ່ານັ້ນ ແລະຜູ້ທີ່ມີອາຍຸລະຫວ່າງ 15 ຫາ 49 ປີ, ຊຶ່ງ
    - ເປັນພະຍາດຫົວໃຈ, ໝາກໄຂ່ຫຼັງ ຫຼື ປອດ
    - ເປັນຫືດ ຫຼື ເບົາຫວານ
    - ມີພູມຕ້ານທານຕ່ຳ
    - ດື່ມເຫຼົ້າໜັກຫຼືສູບຢາຫຼາຍ

ສຳລັບບາງຄົນທີ່ມີພະຍາດຮ້າຍແຮງ, ໄດ້ຮັບການປິ່ນປົວດ້ວຍຢາປະຕິຊີວະນະເປັນເວລາຕິດຕໍ່ກັນ ກໍອາດຕ້ອງໄດ້ສັກຢາປ້ອງກັນ.

ຖ້າໄດ້ຮັບການສັກຢາຄັ້ງທຳອິດເມື່ອອາຍຸ 65 ປີຫຼືເກີນກວ່ານັ້ນ, ຂໍແນະນຳໃຫ້ສັກຢາຕື່ມອີກໃນ 5 ປີຕໍ່ມາ.

ນອກນີ້ ກໍຂໍແນະນຳໃຫ້ສັກຢາໃຫ້ຄົນທີ່ອາຍຸ ລະຫວ່າງ 15-64 ປີຊຶ່ງເຄີຍມີຫຼືພວມມີອາການດັ່ງນີ້:

- ພູມຕ້ານທານຕ່ຳ
- ຜ່າຕັດເອົາມ້າມອອກຫຼືມ້າມບໍ່ເຮັດວຽກດີ
- ເປັນພະຍາດຊຳເຮື້ອ (ຕົວຢ່າງ: ພະຍາດກ່ຽວກັບ ຫົວໃຈ, ໝາກໄຂ່ຫຼັງ, ປອດ, ເປັນເບົາຫວານ ຫຼື ພະຍາດທີ່ເກີດຈາກເຫຼົ້າ)
- ນ້ຳໃນສມອງແລະໄຂສັນຫຼັງຮົ່ວ
- ຜູ້ທີ່ສູບຢາ

ສຳລັບພວກດັ່ງກ່າວນີ້ ຂໍແນະນຳໃຫ້ສັກຢາວັກຊີນຊຸດນຶ່ງອາດຈະແມ່ນຕອນອາຍຸໄດ້ 65 ປີ ຫຼື 10 ປີຫຼັງຈາກສັກຢາຄັ້ງທຳອິດ (ແລ້ວແຕ່ວ່າອັນໃດຈະແມ່ນການສັກທີ່ລຸນ)

## ຈະກວດຫາໂຣກນີ້ໄດ້ຢ່າງໃດ?

ທ່ານໝໍຂອງທ່ານສາມາດກວດຫາໂຣກ pneumococcal ນີ້ໄດ້ໂດຍສັງເກດເບິ່ງອາການ, ການກວດຮ່າງກາຍ, ແລະໂດຍການກວດແບບຕ່າງໆ. ການກວດຕ່າງໆຮວມມີ ສ່ອງເອັກສ໌ເຣຍ໌ເບິ່ງໜ້າເອິກ

ແລະເອົາຕົວຢ່າງໄປ ກວດຫາເຊື້ອແບັກທີເຣັຍຈາກພາກສ່ວນຕ່າງໆໃນຮ່າງກາຍຂອງທ່ານ (ເຊັ່ນ ເລືອດ ຫຼື ນ້ຳຈາກສມອງແລະ ໄຂສັນຫຼັງ).

## ຈະປິ່ນປົວໂຣກນີ້ໄດ້ຢ່າງໃດ?

ການປິ່ນປົວຮວມມີ ການໃຊ້ຢາປະຕິຊີວະນະ, ຢາເພື່ອຄວບຄຸມອາການໄຂ້ແລະອາການປວດ, ແລະ ດື່ມນ້ຳເພື່ອປ້ອງກັນອາການຮ່າງກາຍຂາດນ້ຳ.

## ຜແນກສາທາຣະນະສຸກມີທ່າທີຢ່າງໃດຕໍ່ໂຣກນີ້?

ທາງຫ້ອງທົດລອງຕ້ອງລາຍງານກໍຣະນີຂອງໂຣກ pneumococcal ທີ່ລຸກລາມ (ເມື່ອເຊື້ອແບັກທີເຣັຍເຂົ້າໄປຢູ່ໃນເລືອດ ຫຼື CSF ຫຼື ເຂດທີ່ປາສຈາກເຊື້ອ) ໃຫ້ຜແນກສາທາຣະນະສຸກທ້ອງຖິ່ນຊາບ. ພະນັກງານຂອງຜແນກສາທາຣະນະສຸກຈະປຶກສາກັບທ່ານໝໍທີ່ປົວ ແລະ ຄົນເຈັບຫຼືຜູ້ດູແລເຂົາເຈົ້າເພື່ອໃຫ້ຮູ້ເຖິງສາເຫດທີ່ອາດເຮັດໃຫ້ສ່ຽງຕໍ່ການຕິດເຊື້ອຊຶ່ງຄົນເຈັບອາດມີຢູ່, ແລະສອບຖາມເບິ່ງປວັດການສັກຢາກັນໂຣກຂອງເຂົາເຈົ້າ. ຕາມປົກກະຕິ ຜູ້ທີ່ພົວພັນໃກ້ຊິດກັບຄົນເຈັບບໍ່ຖືວ່າສ່ຽງຫຼາຍຂຶ້ນແລະບໍ່ຈຳເປັນຕ້ອງມີການຕິດຕາມ. ຂໍ້ມູນກ່ຽວກັບຈຳນວນຄົນເປັນໂຣກ pneumococcal ແລະສາເຫດໃນການເປັນຈະຊ່ວຍໃຫ້ ສາມາດ ຄົ້ນພົບວິທີການປ້ອງກັນໂຣກນີ້ໄດ້ດີຂຶ້ນ.

## ຣາຍລະອຽດເພີ້ມເຕີມ - ຜແນກສາທາຣະນະສຸກແຫ່ງຣັດ NSW



**1300 066 055**

**www.health.nsw.gov.au**